ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 01 ສປປ.

ລົງວັນທີ-------

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍການດັດແກ້ອາກອນຊົມໃຊ້ແບບທຽບຖານ.**

---

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 2 ;
- ອີງຕາມມາດຕາ 88 ຂອງກົດໝາຍສ່ວຍສາອາກອນ ເລກທີ 04/95/ສພຊ ລົງວັນທີ 14/10/95;
- ອີງຕາມ ລັດຖະບັນຍັດສະບັບເລກທີ 02/ສປປ ລົງວັນທີ 10/11/97;
- ອີງຕາມ ລັດຖະບັນຍັດສະບັບເລກທີ 01/ສປປ ລົງວັນທີ 28/09/98;
- ອີງຕາມ ການສະເໜີຂອງທ່ານ ນາຍົກລັດຖະມົນຕີແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ນຍ ລົງວັນທີ 23 ມັງກອນ 2000;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ ລົງວັນທີ 08 ກຸມພາ 2000 ວ່າດ້ວຍການດັດແກ້ອາກອນຊົມໃຊ້.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະບັນຍັດ :*

*ມາດຕາ 1* : ໃຫ້ລວມເອົາອັດຕາພາສີນຳເຂົ້າລົດ ທີ່ບົ່ງໄວ້ໃນມາດຕາ 02 ຂອງລັດຖະບັນຍັດ ເລກທີ 02/ສປປ. ລົງວັນທີ 10/11/1997 ອັດຕາອາກອນຊົມໃຊ້ລົດ, ອັດຕາອາກອນຕົວເລກທຸລະກິດ ຈາກການນຳເຂົ້າ ແລະ ການຂາຍລົດຢູ່ໃນປະເທດ ທີ່ບົ່ງໄວ້ໃນມາດຕາ 1,6,7 ຂອງລັດຖະບັນຍັດ ເລກທີ 01/ສປປ. ລົງວັນທີ 28/09/98 ແລະ ອັດຕາອາກອນຊົມໃຊ້ລົດແບບ

| ລຳດັບ | ປະເພດລົດທີ່ຕ້ອງເສຍອາກອນ | ອັດຕາອາກອນ |
|---|---|---|
| 1 | ລົດເກັ່ງທຸກປະເພດ | 180% |
| 2 | ລົດຈິບທຸກປະເພດ | 111% |
| 3 | ລົດກະບະທຸກປະເພດ | 84% |
| 4 | ລົດໂດຍສານ, ລົດຕູ້, ລົດບັດ ແລະ ລົດເມ | 61% |
| 5 | ລົດບັນທຸກທຸກປະເພດ | 58% |
| 6 | ລົດຈັກ (ສອງລໍ້) | 120% |

*ມາດຕາ 2* : ບັນດາລັດຖະບັນຍັດ ແລະ ຂໍ້ກຳນົດກ່ຽວກັບການເສຍພາສີນຳເຂົ້າລົດອາກອນຊົມໃຊ້ລົດ ແລະ ອາກອນຕົວເລກທຸລະກິດ ຈາກການນຳເຂົ້າ ແລະ ການຂາຍລົດຢູ່ໃນປະເທດທີ່ໄດ້ປະກາດໃຊ້ໃນເມື່ອກ່ອນຫາກຂັດກັບລັດຖະບັນຍັດສະບັບນີ້ລ້ວນແຕ່ຖືກລົບລ້າງ.

*ມາດຕາ 3* : ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີໜ້າທີ່ອອກດຳລັດລະອຽດ ເພື່ອຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ໃຫ້ປະກົດຜົນເປັນຈິງ.

*ມາດຕາ 4* : ລັດຖະບັນຍັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ່ລັດຖະບານແຫ່ງ ສປປ ລາວໄດ້ອອກດຳລັດຈັດຕັ້ງປະຕິບັດເປັນຕົ້ນໄປ.

ວຽງຈັນ, ວັນທີ 15 ກຸມພາ 2000.

ປະທານປະເທດ ແຫ່ງ ສປປ ລາວ.

ຄຳໄຕ **ສີພັນດອນ**